# ຝຶກອົບຮົມຫົວຂໍ້ "ການເປັນຄູຝຶກຂອງສະຖານປະກອບການ"
# In-Company Trainers Training (In-CTs Training)

**ໄລຍະເວລາ:** **13 ຫາ 15 ກຸມພາ 2024 (03 ວັນ), ເວລາ 08:30 ຫາ 16:30 ໂມງ. ພັກທ່ຽງ 12:00  13:00 ໂມງ**
**ສະຖານທີ່:** **ສະພາການຄ້າ ແລະ ອຸດສາຫະກໍາ ແຫ່ງຊາດລາວ (ສຄອຊ).**

## ຜູ້ເຂົ້າຮ່ວມເປົ້າໝາຍ

ຈໍານວນ 15 ທ່ານ, ທີ່ເຮັດວຽກຮັບຜິດຊອບໃນຕໍາແໜ່ງ ຜູ້ຈັດການທົ່ວໄປ, ຜູ້ຈັດການຝ່າຍບຸກຄົນ, ຫົວໜ້າງານ, ວິທະຍາກອນ (ຄູຝຶກ), ນາຍຊ່າງເຕັກນິກ ແລະ ຜູ້ຕ້ອງການຮຽນຮູ້ທັກສະການຖ່າຍທອດຄວາມຮູ້ ເພື່ອຝຶກອົບຮົມບຸກຄະລາກອນໃນສະຖານປະກອບການ.

## ກ່ຽວກັບຊຸດຝຶກອົບຮົມ ແລະ ຈຸດປະສົງ

ການຝຶກອົບຮົມໃນສະຖານປະກອບການ ຫລື ບໍລິສັດແມ່ນເຄື່ອງມືທີ່ສໍາຄັນໃນການພັດທະນາທັກສະການປະຕິບັດງານຂອງພະນັກງານ ແລະ ກ່ຽວຂ້ອງກັບການຝຶກອົບຮົມທັງໝົດທີ່ດໍາເນີນການໃນສະຖານປະກອບການ ເຊັ່ນ: ການຝຶກອົບຮົມເພື່ອເພີ່ມຄວາມຮູ້ ແລະ ທັກສະໃຫ້ພະນັກງານທີ່ຢູ່ປະຈໍາ, ການຝຶກອົບຮົມເວລາຮັບຮັບພະນັກງານໃໝ່, ການຝຶກອົບຮົມໃນໜ້າວຽກຕົວຈິງ ແລະ ການຝຶກນັກສຶກສາຝຶກງານ. ເຊິ່ງສາມາດຮວມເຂົ້າກັບຮູບແບບ ການຮຽນ-ການສອນອາຊີວະສຶກສາແບບຄວບຄູ່ ທີ່ສາມາດເບິ່ງເຫັນຜົນປະໂຫຍດ ແລະ ລວມເອົາການຝຶກອົບຮົມພາຍໃນບໍລິສັດເປັນສ່ວນໜຶ່ງຂອງ ຍຸດທະສາດການພັດທະນາຊັບພະຍາກອນມະນຸດ ທີ່ນໍາໄປສູ່ຄວາມສໍາເລັດຂອງສະຖານປະກອບການ.
ຄຸນນະພາບ ແລະ ຜົນໄດ້ຮັບຂອງການຝຶກອົບຮົມໃນ ສະຖານປະກອບການ ຂຶ້ນກັບຄວາມສາມາດຂອງຜູ້ທີ່ຮັບຜິດຊອບໃນການຖ່າຍທອດຄວາມຮູ້ ແລະ ທັກສະ ເຊັ່ນ: ຄູຝຶກ, ຫົວໜ້າງານ, ນາຍຊ່າງເທັກນິກທີ່ມີສີມື, ພະນັກງານ ແລະ ບຸກຄະລາກອນຜູ້ອື່ນໆທີ່ມີສ່ວນກ່ຽວຂ້ອງໃນການຝຶກອົບຮົມການສອນ ຫລື ການໃຫ້ຄໍາປຶກສາ, ຄູຝຶກໃນສະຖານປະກອບການ ແມ່ນອ້າງອີງເຖິງກຸ່ມຄົນທັງໝົດທີ່ກ່າວມາຂ້າງເທິງ.

**ຈຸດປະສົງຂອງການຝຶກອົບຮົມ:** ເພື່ອສ້າງຂີດຄວາມສາມາດ ໃນດ້ານບົດບາດ ແລະ ໜ້າທີ່ການເປັນຄູຝຶກໃນສະຖານປະກອບການ, ການບໍລິຫານຈັດການ ການຮຽນ-ການສອນຜູ້ໃຫ່ຍ, ການວິເຄາະໜ້າວຽກ ແລະ ຄວາມຕ້ອງການ ການຮຽນຮູ້, ການວາງແຜນ ແລະ ກະກຽມການຝຶກອົບຮົມ, ທັກສະໃນການດໍາເນີນການຝຶກອົບຮົມ, ການປະເມີນຜົນ ແລະ ພັດທະນາການຝຶກອົບຮົມ ຢ່າງມີປະສິດທິຜົນ. ລວມທັງບົດບາດກ່ຽວຂ້ອງກັບການຈັດການຮຽນ-ການສອນ ແລະ ຝຶກອາຊີບ ເພື່ອໃຫ້ບັນລຸຈຸດປະສົງເປົ້າໝາຍຂອງຫລັກສູດຮູບແບບອາຊີວະສຶກສາແບບຄວບຄູ່.
ຫລັກສູດຝຶກອົບຮົມນີ້ ແມ່ນດັດປັບຈາກມາດຕະຖານອາຊຽນສໍາລັບຄູຝຶກໃນສະຖານປະກອບການ ເຊິ່ງອອກແບບສະເພາະ ເພື່ອເສີມສ້າງຄວາມຮູ້ ຄວາມສາມາດ ກ່ຽວກັບບົດບາດ ແລະ ໜ້າທີ່ ໃນການເປັນຜູ້ຝຶກສອນໃນສະຖານປະກອບການ ຢ່າງມີປະສິດທິຜົນ. (ວາລະການຝຶກອົບຮົມ ຄັດຕິດມາພ້ອມ).
**ຄູຝຶກ ແລະ ພາສາທີ່ໃຊ້:** ທີມຄູຝຶກຄົນລາວທີ່ເປັນມືອາຊີບ ຈາກສູນບໍລິການ ອສຄ / ສຄອຊ ເຊິ່ງໄດ້ ຜ່ານການສ້າງເປັນຄູຝຶກຕົ້ນແບບຕາມມາດຕະຖານຄູຝຶກຂອງສະຖານປະກອບການ ອາຊຽນ ແລະ ມີປະສົບການການເຮັດວຽກຝຶກອົບຮົມດ້ານຄູຝຶກຂອງສະຖານປະກອບການ. ການຝຶກອົບຮົມຈະດໍາເນີນເປັນພາສາລາວ.

**ຄ່າລົງທະບຽນ**: ສໍາລັບບຸກຄົນທົ່ວໄປ ຄ່າລົງທະບຽນ 1,500,000ກີບ (ໜຶ່ງລ້ານຫ້າແສນກີບ)/ທ່ານ, ສະຖານປະກອບການຄູ່ຮ່ວມງານອາຊີວະສຶກສາແບບຄວບຄູ່ ແລະ ບໍລິສັດສະມາຊິກສາມັນ ຮັບສ່ວນຫຼຸດ 10%, ສະມາຊິກ VIP ຮັບສ່ວນຫຼຸດ 20% ແລະ ສະມາຊິກ VVIP ຂອງສະພາການຄ້າ ແລະ ອຸດສາຫະກາແຫ່ງຊາດ ຈະໄດ້ຮັບສ່ວນຫຼຸດ ທັນທີ 30% ຂອງຄ່າລົງທະບຽນ.
**ໝາຍເຫດ:** ຜູ້ເຂົ້າຮ່ວມ ຈະໄດ້ຮັບການບໍລິການອາຫານຫວ່າງ ແລະ ອາຫານທ່ຽງ ໄລຍະການຝຶກອົບຮົມ ແລະ ໃບຢັ້ງຢືນການເຂົ້າຮ່ວມຈາກ ສຄອຊ.

**ໃບຕອບຮັບການເຂົ້າຮ່ວມ ຝຶກອົບຮົມ ການເປັນຄູຝຶກຂອງສະຖານປະກອບການ**

ສົ່ງໃບສະໝັກ ແລະຊຳລະຄ່າລົງທະບຽນ ທີ່ ຫ້ອງການ ສຄອຊ, Tel/Fax 021 453314, 452580

WhatsApp 020 55261789, Email: khonesavanh.c@lncci.la

ຊື່ສະຖານປະກອບການ / ບໍລິສັດ / ໂຮງງານ ..............................................................................................

ທີ່ຢູ່:..............................................................................................................................................

ໂທລະສັບ:.................................................................ອີເມລ.……...........................................................

ຊື່ ເບີຕິດຕໍ່ ຜູ້ປະສານງານ.......................................................................................................................

ລາຍຊື່ຜູ້ເຂົ້າຮ່ວມຝຶກອົບຮົມ (ກະລຸນາຂຽນຊື່ ແລະ ນາມສະກຸນທີ່ໃຊ້ເປັນທາງການໃຫ້ຊັດເຈນ ສຳລັບອອກໃບຢັ້ງຢືນ)

1.ຊື່ ແລະ ນາມສະກຸນ:..............................................................................................ເບີມືຖື ………………………….

2.ຊື່ ແລະ ນາມສະກຸນ:..............................................................................................ເບີມືຖື ………………………….

◯ ບຸກຄົນທົ່ວໄປ ◯ ສະມາຊິກສາມັນ ◯ ສະມາຊິກ VIP ◯ VVIP ◯ ຄູ່ຮ່ວມງານ DCT

**ວາລະການຝຶກອົບຮົມຫົວຂໍ້: ການເປັນຄູຝຶກຂອງສະຖານປະກອບການ**

**ລະຫວ່າງວັນທີ 13 ຫາ 15 ກຸມພາ 2024 (03 ວັນ), ເວລາ 08:30 ຫາ 16:30 ໂມງ. ພັກທ່ຽງ 12:00 13:00 ໂມງ**

| ເວລາ | ມື້ທີ I | ມື້ທີ II | ມື້ທີ III |
|---|---|---|---|
| 9:00–12:00<br>Break<br>10:15–10:30 | • ລົງທະບຽນ<br>• ເປີດການຝຶກອົບຮົມ<br>• ທຳຄວາມຮູ້ຈັກກັນ<br>• ແນະນຳກ່ຽວກັບຫລັກສູດຝຶກອົບຮົມ<br>• ປະເມີນຄວາມຮູ້ກ່ອນການຝຶກອົບຮົມ<br>• ຫລັກການໃນການຈັດຕັ້ງປະຕິບັດ, ລະບຽບກົດໝາຍທີ່ກ່ຽວກັບອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ<br>• ກ່ຽວກັບສູນບໍລິການ ອາຊີວະສຶກສາແບບຄວບຄູ່/ ສູນບໍລິການ ອສຄ | • ການດຳເນີນການຝຶກອົບຮົມ<br>• ເລືອກຫົວຂໍ້ສຳລັບ ສາທິດການຝຶກອົບຮົມຂອງແຕ່ລະທ່ານ<br>• ການຂຽນໂຄງຮ່າງການຮຽນ-ການສອນ | • ຜູ້ເຂົ້າຮ່ວມແຕ່ລະທ່ານ ຝຶກປະຕິບັດການຝຶກອົບຮົມຕົວຈິງ<br>• ຜູ້ເຂົ້າຮ່ວມແຕ່ລະທ່ານ ສັງເກດການ, ປະກອບຄວາມເຫັນ ແລະ ຕິຊົມ<br>• ບົດບາດກ່ຽວຂ້ອງກັບການຈັດການຮຽນ-ການສອນ ອສຄ<br>- ປະຕິທິນການຝຶກອົບຮົມ<br>- ປຶ້ມລາຍງານ ນສສ<br>- ແຜນໝູນວຽນ ນສສ<br>- ແຜນຝຶກອົບຮົມສ່ວນບຸກຄົນ |
| ***ພັກທ່ຽງ 12:00-13:00*** | | | |
| 13:00–16:00<br>Break<br>14:30–14:45 | • ການວິເຄາະໜ້າວຽກ ແລະ ກຳນົດຄວາມຕ້ອງການໃນການຮຽນຮູ້<br>• ການວາງແຜນ ແລະ ການກະກຽມຝຶກອົບຮົມ. | • ການປະເມີນ ແລະການພັດທະນາຝຶກອົບຮົມເພີ່ມຕື່ມ<br>• ຜູ້ເຂົ້າຮ່ວມແຕ່ລະທ່ານກະກຽມ ແລະ ວາງແຜນດຳເນີນການຝຶກອົບຮົມ. | • ປະເມີນຄວາມຮູ້ຫລັງການຝຶກອົບຮົມ<br>• ປະເມີນຜົນການຝຶກອົບຮົມ<br>• ມອບໃບຢັ້ງຢືນການຝຶກອົບຮົມ<br>• ປິດການຝຶກອົບຮົມ |